UNITED NATIONS NATIONS UNIES

ຂໍ້ມູນສໍາລັບສື່ມວນຊົນ **17 ທັນວາ 2009**

# ເຄື່ອງຊ່ວຍເຫຼືອຈາກພະນັກງານອົງການສະຫະປະຊາຊາດປະຈຳລາວສຳລັບຊຸມຊົນທີ່ໄດ້ຮັບຜົນກະທົບຈາກພະຍຸເກດສະໜາ

## ວັນທີ 17 ທັນວາ 2009

ໃນວັນທີ 15 ທັນວາ 2007, ຕົວແທນຂອງພະນັກງານຈາກ ທີມງານ ອົງການ ສປຊ ທີ່ເຮັດວຽກຢູ່ ສປປ ລາວ ໄດ້ມອບເຄື່ອງຊ່ວຍເຫຼືອ ເງິນຈຳນວນ 8.5 ລ້ານກີບ ພ້ອມດ້ວຍເຄື່ອງບໍລິຈາກຈຳນວນ 11 ແກັດ ໃຫ້ແກ່ອົງການ ສະພາກາແດງລາວ ເພື່ອຊ່ວຍເຫຼືອແກ່ຊຸມຊົນທີ່ໄດ້ຮັບຜົນກະທົບຈາກພະຍຸ ເກດສະໜາ

ເຄື່ອງຊ່ວຍເຫຼືອດັ່ງກ່າວໄດ້ມາຈາກການປະກອບສ່ວນຂອງພະນັກງານທັງເປັນຄົນລາວ ແລະ ຄົນຕ່າງປະເທດ ທີ່ກຳລັງເຮັດວຽກຢູ່ຕາມອົງການຈັດຕັ້ງຕ່າງໆຂອງທີມງານອົງການ ສປຊ ປະຈຳລາວ, ແລະ ທ້ອນໂຮມໃນໂອກາດ ວັນພະນັກງານອົງການ ສປຊ ໃນເດືອນ ຕຸລາ 2009.

ໂດຍພະນັກງານຂອງອົງການ ສປຊ ຫຼາຍຄົນກໍ່ໄດ້ມີຖິ່ນຖານພູມລຳເນົາ ແລະ ເຮັດວຽກຢູ່ໃກ້ກັບພື້ນທີ່ດັ່ງກ່າວ ແລະໄດ້ຮັບຜົນກະທົບຈາກລົມ ກໍ່ຄືນ້ຳຖ້ວມ ທີ່ເກີດຈາກພະຍະເກດສະໜາ ທີ່ນຳຄວາມເສຍຫາຍມາໃຫ້ແກ່ຊຸມຊົນ, ແລະ ພວກເຂົາກໍ່ບໍ່ສາມາດຫຼີກລ່ຽງຜົນເສຍຫາຍຕໍ່ກັບຊີວິດການເປັນຢູ່ຂອງຄອບຄົວ ແລະ ການພັດທະນາບັນດາໂຄງການຢູ່ໃນພື້ນທີ່ດັ່ງກ່າວ.

ທ່ານ ນາງ ຈັນທະວິສຸກ ນິລະໄຊ ຕົວແທນຄະນະກຳມະການສະມາຄົມພະນັກງານ ໄດ້ກ່າວວ່າ: "ພວກເຮົາຂໍສະແດງຄວາມເຫັນອົກເຫັນໃຈ ແລະ ເປັນຫ່ວງເປັນໄຍ ຕໍ່ກັບຜູ້ທີ່ໄດ້ຮັບຜົນກະທົບດ້ວຍການແບ່ງປັນວັດຖຸປັດໃຈ ເພື່ອຊ່ວຍເຫຼືອແກ່ຊຸມຊົນເຫຼົ່ານີ້ໄດ້ສ້າງສາການດຳລົງຊີວິດຂອງເຂົາເຈົ້າຄືນ,"

ຄະນະກຳມະການສະມາຄົມພະນັກງານ ຂອງອົງການ ສປຊ ໄດ້ເລືອກມອບເຄື່ອງຊ່ວຍເຫຼືອດັ່ງກ່າວຜ່ານອົງການ ສະພາກາແດງລາວ ເພື່ອຈະເປັນຜູ້ນຳເອົາເຄື່ອງຊ່ວຍເຫຼືອຈາກພະນັກງານດັ່ງກ່າວເພື່ອໄປມອບໃຫ້ກັບຜູ້ທີ່ໄດ້ຮັບຜົນກະທົບຫຼາຍທີ່ສຸດ ໃນບັນດາແຂວງພາກໃຕ້ຂອງລາວ ແລະ ຈະສາມາດຕອບສະໜອງຄວາມຕ້ອງການໃຫ້ກັບເຂົາເຈົ້າໄດ້ໃນສ່ວນໃດສ່ວນໜຶ່ງ.

**ໝາຍເຫດ**:

ທີມງານຂອງອົງການ ສປຊ ປະຈຳ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ໃຫ້ຄຳໝັ້ນສັນຍາວ່າຈະເຮັດວຽກໂດຍການເປັນຄູ່ຮ່ວມງານກັບລັດຖະບານ ສປປ ລາວ ເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ, ໂດຍສະເພາະແມ່ນປະຊາຊົນຜູ້ທີ່ດ້ອຍໂອກາດ ແລະ ມີພື້ນກະທົບງ່າຍ. ພວກເຮົາສືບຕໍ່ເຮັດວຽກຢ່າງໃກ້ຊິດກັບລັດຖະບານ ແລະ ບັນດາຜູ້ຮ່ວມງານທັງໝົດ ເພື່ອໃຫ້ບັນລຸເປົ້າໝາຍສະຫະສະຫວັດ ດ້ານການພັດທະນາ. ຄວາມພະຍາຍາມຮ່ວມກັນຂອງພວກເຮົາ ແມ່ນຊ່ວຍເຫຼືອປະຊາຊົນທຸກຄົນໃນ ສປປ ລາວ ບັນລຸມາດຕະຖານການດຳລົງຊີວິດທີ່ດີກ່ວາເກົ່າ.

ສຳລັບຂໍ້ມູນເພີ່ມເຕີມ ກະລູນາຕິດຕໍ່ໜ່ວຍງານຂໍ້ມູນຂ່າວສານ ຂອງ ອົງການ ສປຊ:

Janet Pontin, ໂທ: 267777 ຕໍ່: 715, ອີເມລ: janet.pontin@undp.org